ຂ່າວ NEWS

BOL–LPB

ທະນາຄານແຫ່ງ ສປປ ລາວ ສາຂາພາກເໜືອ ແຂວງຫຼວງພະບາງ

Tel: 071 260700 Fax: 071 260718

Website: https://www.bol.gov.la/luangprabang

# ການເຄື່ອນໄຫວວຽກງານຂອງ ສາຂາທະນາຄານແຫ່ງ ສປປ ລາວ ພາກເໜືອ ແຂວງຫຼວງພະບາງ ກ່ຽວກັບວຽກງານຄຸ້ມຄອງເງິນຕາຕ່າງປະເທດ ພາຍໃນແຂວງໄຊຍະບູລີ




ສາຂາທະນາຄານແຫ່ງ ສປປ ລາວ ພາກເໜືອ ແຂວງຫຼວງພະບາງ (ທຫລ.ຫຼບ) ໄດ້ລົງເຄື່ອນໄຫວວຽກງານຄຸ້ມຄອງເງິນຕາຕ່າງປະເທດ ພາຍໃນ 4 ເມືອງ ຂອງແຂວງໄຊຍະບູລີ ຄື: ເມືອງຄອບ, ເມືອງຊຽງຮ່ອນ, ເມືອງເງິນ ແລະ ເມືອງຫົງສາ. ການເຄື່ອນໄຫວດັ່ງກ່າວ ທຫລ.ຫຼບ ຮ່ວມກັບຄະນະນຳເມືອງຈັດກອງປະຊຸມເຜີຍແຜ່ກົດໝາຍວ່າດ້ວຍການຄຸ້ມຄອງເງິນຕາຕ່າງປະເທດ (ສະບັບປັບປຸງ) ແລະ ເປີດກອງປະຊຸມຮ່ວມກັບຄະນະຊີ້ນຳ ແລະ ອະນຸກຳມະການຕິດຕາມ, ກວດກາ ການຈັດຕັ້ງປະຕິບັດວຽກງານຄຸ້ມຄອງເງິນຕາຕ່າງປະເທດ ແລະ ສົ່ງເສີມການນຳໃຊ້ເງິນກີບຂັ້ນເມືອງ ໂດຍການເປັນປະທານຮ່ວມຂອງທ່ານຮອງເຈົ້າເມືອງ ຜູ້ຊີ້ນຳວຽກງານເສດຖະກິດ ຂອງບັນດາເມືອງ

ແລະ ທ່ານ ນາງ ໂພທິຈັນ ທຳມະເທວາ ຫົວໜ້າ ທຫລ.ຫຼບ ໃນລະຫວ່າງວັນທີ 3-6 ກໍລະກົດ 2023 ທີ່ຫ້ອງປະຊຸມຫ້ອງວ່າການຂອງບັນດາເມືອງ. ມີຄະນະຈາກ ທຫລ.ຫຼບ, ທະນາຄານທຸລະກິດ, ສະຖາບັນການເງິນຈຸລະພາກ ແລະ ວິສາຫະກິດເຂົ້າຮ່ວມຢ່າງພ້ອມພຽງ. ຈຸດປະສົງແມ່ນເພື່ອໃຫ້ຮັບຮູ້ ແລະ ເຂົ້າໃຈເຖິງລະບຽບການ ແລະ ມາດຕະການ ກ່ຽວກັບການຄຸ້ມຄອງເງິນຕາຕ່າງປະເທດ ເພື່ອຊຸກຍູ້ສົ່ງເສີມການຈໍລະຈອນເງິນຕາ, ການຄ້າ, ການບໍລິການ, ການລົງທຶນໃຫ້ມີປະສິດທິພາບ, ປະສິດທິຜົນ, ສ້າງຄວາມເຂັ້ມແຂງຖານະການຊໍາລະກັບຕ່າງປະເທດ ແລະ ຄັງສໍາຮອງເງິນຕາຕ່າງປະເທດ ແນໃສ່ຍົກສູງຄຸນຄ່າ ແລະ ຮັກສາສະຖຽນລະພາບຂອງເງິນຕາແຫ່ງຊາດ, ເປີດກວ້າງການພົວພັນຮ່ວມມືເສດຖະກິດກັບຕ່າງປະເທດ ປະກອບສ່ວນເຂົ້າໃນການພັດທະນາເສດຖະກິດ-ສັງຄົມຂອງຊາດ.

ໃນກອງປະຊຸມໄດ້ມີການລາຍງານສະພາບເສດຖະກິດພາຍໃນເມືອງໃນໄລຍະຜ່ານມາ ເປັນຕົ້ນແມ່ນ ການຜະລິດ, ການຄ້າ ແລະ ການລົງທຶນ. ຫຼັງຈາກນັ້ນ, ກໍມີການປຶກສາຫາລືກ່ຽວກັບການຈັດຕັ້ງປະຕິບັດວຽກງານຄຸ້ມຄອງເງິນຕາຕ່າງປະເທດພາຍໃນເມືອງ ໃຫ້ໄດ້ຮັບປະສິດທິຜົນສູງສຸດ ໂດຍສະເພາະ ການຕິດຕາມລາຍຮັບຈາກການສົ່ງອອກສິນຄ້າ, ການຕິດຕາມກະແສເງິນຕາໄຫຼເຂົ້າຈາກການລົງທຶນຕ່າງປະເທດ, ການຕິດຕາມການນໍາເງິນຕາເປັນເງິນສົດ ເຂົ້າ-ອອກ ສປປ ລາວ, ການແລກປ່ຽນເງິນຕາຕ່າງປະເທດທີ່ບໍ່ໄດ້ຮັບອະນຸຍາດ, ການຕິດຕາມ ກວດກາການກໍານົດ ແລະ ຕິດລາຄາ, ການໂຄສະນາ, ຊໍາລະ ແລະ ຮັບຊໍາລະ ຄ່າສິນຄ້າ, ຄ່າບໍລິການ ແລະ ຄ່າອື່ນ ລວມທັງການກໍານົດໂຄງສ້າງລາຄາໃຫ້ເປັນເງິນກີບ.



ພາຍຫຼັງສຳເລັດກອງປະຊຸມ ທຫລ.ຫຼບ ໄດ້ລົງເກັບກັບພາກສ່ວນກ່ຽວຂ້ອງຂອງເມືອງ ລົງເຄື່ອນໄຫວຕິດຕາມການນຳເງິນສົດ ເຂົ້າ-ອອກ ທີ່ດ່ານສາກົນປາງມອນ ແລະ ດ່ານນໍ້າເງິນ. ຄຽງຄູ່ກັບການປຶກສາຫາລືກ່ຽວກັບວຽກງານຕິດຕາມກະແສເງິນຕາໄຫຼເຂົ້າ ຈາກການນຳເຂົ້າ-ສົ່ງອອກສິນຄ້າໄປຕ່າງປະເທດ.

**ຂ່າວ: ເຄນສະຫວັດ ສຸກສະຫວັນ**

**ພາບ: ແສງສຸລິຈັນ ບຸນຍົງ**

ຮັກບ້ານເກີດເມືອງນອນ ໃຊ້ຈ່າຍທອນເປັນເງິນກີບ